ອົງການ ສະຫະປະຊາຊາດເພື່ອການພັດທະນາ

Empowered lives. Resilient nations.

# ບົດຂ່າວ

## ສປປ ລາວ ປະກອບສ່ວນເຂົ້າໃນ ວາລະ ການປ່ຽນແປງດິນຟ້າອາກາດລະດັບໂລກ

*ອີກບາດກ້າວໜຶ່ງທີ່ສຳຄັນຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການ ສະຫະປະຊາຊາດເພື່ອການພັດທະນາ ໃນການກ້າວໄປສູ່ການຫລຸດຜ່ອນ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ*

**ນະຄອນຫລວງວຽງຈັນ, 26 ກັນຍາ 2016** – ບົດລາຍງານແຫ່ງຊາດຄາດໝາຍໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ເພື່ອຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ ກຳລັງ ຖືກຈັດຕັ້ງປະຕິບັດ ໂດຍໄດ້ຮັບການຊ່ວຍເຫລືອຈາກໂຄງການໃໝ່ ທີ່ໃຫ້ທຶນໂດຍກອງທຶນສິ່ງແວດລ້ອມໂລກ, ໂດຍການຮ່ວມມືກັນລະຫວ່າງ ອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນ ແປງດິນຟ້າອາກາດ.

ອາທິດທີ່ຜ່ານມາສະແດງໃຫ້ເຫັນເຖິງຄວາມກ້າວໜ້າ ໃນການປຶກສາຫາລືໃນລະດັບໂລກກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ. ປະເທດຈີນ ແລະ ສະຫະລັດອາເມລິກາ ໄດ້ໃຫ້ສັດຕະຍາບັນຢ່າງເປັນທາງການຕໍ່ສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າກາດ. ໂດຍການລົງນາມໃນ ສັນຍາ ປາຣີ, ປະເທດທີ່ເປັນລັດພາຄີໄດ້ໃຫ້ຄຳໝັ້ນໝາຍຂອງພວກເຂົາຕໍ່ການປະກອບສ່ວນເຂົາໃນວຽກງານປ່ຽນແປງດິນຟ້າອາກາດ ແລະ ຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ. ສປປ ລາວ ໄດ້ລົງນາມສັນຍາດັ່ງກ່າວ ໃນວັນອະນຸລັກໂລກ ປີນີ້, ວັນທີ 22 ເມສາ ທີ່ ສຳນັກງານໃຫຍ່ຂອງອົງການສະຫະປະຊາຊາດ ນະຄອນນິວຢອກ.

ໃນວັນທີ 7 ກັນຍາ 2016 ໃນຊ່ວງໄລຍະກອງປະຊຸມສຸດຍອດອາຊຽນ ທີ່ຜ່ານມາ, ການເປັນເຈົ້າພາບໂດຍ ສປປ ລາວ ໃນນາມປະທານ ສະມາຄົມອາຊຽນໃນປະຈຸບັນ, ພະນະທ່ານ ນາຍົກລັດຖະມົນຕີ ທອງລຸນ ສີສຸລິດ ໄດ້ມອບການໃຫ້ສັດຕະຍາບັນຕໍ່ ສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຕໍ່ເລຂາທິການໃຫຍ່ ຂອງອົງການສະຫະປະຊາຊາດ ທ່ານ ບັນຄີມຸນ.

ການປ່ອຍອາຍພິດເຮືອນແກ້ວ ເຮັດໃຫ້ມີການປ່ຽນແປງດິນຟ້າອາກາດ ຊຶ່ງໄດ້ກາຍເປັນວາລະ ຂອງການປຶກສາຫາລື ໃນລະດັບໂລກມາຫລາຍປີແລ້ວ. ຢ່າງໃດກໍ່ຕາມ, ສັນຍາປາຣີ ທີ່ຖືກຮັບຮອງໃນເດືອນ ທັນວາ ປີທີ່ຜ່ານມາ ໄດ້ຕັ້ງເປົ້າໝາຍສູ້ຊົນ ຊຶ່ງຮຽກຮ້ອງໃຫ້ມີການຮ່ວມມືກັນໃນລະດັບໂລກ ເພື່ອຕ້ານກັບການ

ປ່ຽນແປງດິນຟ້າອາກາດ, ແລະ ຈັດຕັ້ງປະຕິບັດບັນດາກິດຈະກຳ ແລະ ການລົງທຶນ ທີ່ກ່າວໄປສູ່ການປ່ອຍທາດອາຍກາກບອນທີ່ຕ່ຳ, ມີຄວາມທົນທານ ແລະ ຄວາມຍືນຍົງໃນອະນາຄົດ.

ກອງປະຊຸມລັດພາຄີສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ໃນປາຣີ (COP 21) ໃນປີທີ່ຜ່ານມາ. ບັນດາປະເທດໄດ້ສົ່ງ ບົດລາຍງານແຫ່ງຊາດຄາດໝາຍໃນການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ, ຊຶ່ງປະກອບດ້ວຍບັນດາແຜນງານ ແລະ ຍຸດທະສາດ ສຳລັບການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ. ສປປ ລາວ ສະແດງໃຫ້ເຫັນເຖິງການສະໜັບສະໜູນ ວາລະການປ່ຽນແປງດິນຟ້າອາກາດ ໂດຍໄດ້ *ສົ່ງບົດລາຍງານແຫ່ງຊາດ* ຂອງຕົນທັນຕາມກຳນົດເວລາ ເພື່ອນຳສະເໜີ ໃນກອງປະຊຸມ COP 21. *ການປະກອບສ່ວນດັ່ງກ່າວນີ້* ຖືວ່າເປັນອົງປະກອບທີ່ສຳຄັນ ທີ່ແຈ້ງການໃຫ້ຮູ້ວ່າເປັນການໃຫ້ສັດຕະຍາບັນຕໍ່ ສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟາອາກາດ.

ເພື່ອປະຕິບັດຕາມ ການໃຫ້ຄຳໝັ້ນສັນຍາຕໍ່ການປະກອບສ່ວນເຂົ້າໃນວຽກງານປ່ຽນແປງດິນຟ້າອາກາດ ແລະ ຫລຸດຜ່ອນການປ່ອຍ ອາຍພິດເຮືອນແກ້ວ. ໃນວັນທີ 13 ກັນຍາ 2016 ໂຄງການ ສ້າງບົດລາຍງານແຫ່ງຊາດຄາດໝາຍໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໄດ້ເປີດຂຶ້ນ ເພື່ອສຸມໃສ່ການຈັດຕັ້ງປະຕິບັດ *ການປະກອບສ່ວນ*ຂອງ ສປປ ລາວ. ໂຄງການດັ່ງກ່າວຈະດຳເນີນໄປ ຈົນເຖິງເດືອນ ກັນຍາ 2017 ແລະ ຈະຈັດຕັ້ງປະຕິບັດ ບັນດາມາດຕະການຕ່າງໆ ເພື່ອຊ່ວຍ ສປປ ລາວ ໃນການຫລຸດຜ່ອນ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ທີ່ ກອງປະຊຸມເປີດໂຄງການຄັ້ງນີ້, ທ່ານ ບາລາຊຸບຣາມານຽມ ມູຣາລີ, ຮອງຜູ້ຕາງໜ້າ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ກ່າວວ່າ "ການພັດທະນາໂຄງການດັ່ງກ່າວນີ້ ແມ່ນມີຄວາມໝາຍສຳຄັນ ຕໍ່ ສປປ ລາວ". "ມັນສະແດງໃຫ້ເຫັນເຖິງຄຳປະຕິຍານ ຂອງ ລັດຖະບານລາວ ເພື່ອປະຕິບັດຕາມຄຳໝັ້ນສັນຍາທີ່ມີໃຫ້ ທີ ກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍການປ່ຽນແປງ ດິນຟ້າອາກາດ (UNFCCC COP 21) ທີ່ ປາຣີ, ແລະ ສປປ ລາວ ໄດ້ກະກຽມ ແລະ ສົ່ງບົດລາຍງານແຫ່ງຊາດຄາດໝາຍໃນການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ ຂອງຕົນໄດ້ທັນຕາມກຳນົດເວລາ."

ກອງປະຊຸມເປີດໂຄງການດັ່ງກ່າວໄດ້ມີການເຂົ້າຮ່ວມຂອງຄູ່ຮ່ວມພັດທະນາທີ່ມາຈາກຫລາຍຂະແໜງການ ລວມມີ ຜູ້ຕາງໜ້າຈາກ ສະຖານທູດອັງກິດ ແລະ ສະຖານທູດຝຣັ່ງ, ແລະ ອົງການຮ່ວມມືລາວ-ເຢຍລະມັນ, ອົງການສະຫະປະຊາຊາດອື່ນໆ ລວມມີ: ອົງການອາຫານ ແລະ ການກະສິກຳ ແລະ ສະບຽງອາຫານ, ແລະ ອົງການອານາໄມໂລກ, ລວມທັງ ຜູ້ຕາງໜ້າຈາກບັນດາກະຊວງຕ່າງໆຂອງລັດ.

ຜົນສຳເລັດຂອງການຈັດຕັ້ງປະຕິບັດຂອງໂຄງການຈະສ້າງພື້ນຖານອັນສຳຄັນໃຫ້ແກ່ການເຊື່ອມສານທີ່ສຳຄັນລະຫວ່າງ ການພັດທະນາດ້ານເສດຖະກິດ, ຄວາມຍືນຍົງ ແລະ ຄວາມຕ້ອງການ ເພື່ອເຊື່ອມສານບັນຫາ

**ອົງການ ສະຫະປະຊາຊາດເພື່ອການພັດທະນາ**

ສິ່ງແວດລ້ອມຕ່າງໆ, ລວມທັງການ ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນບັນດາແຜນພັດທະນາແຫ່ງຊາດ.

ຈົບ

**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ທ່ານນາງ ມາກຣາເຣັດ ໂຈນສ-ວິນລຽມ, ຫົວໜ້າໜ່ວຍງານສິ່ງແວດລ້ອມ, ອົງການ ສປຊ ປະຈຳ ສປປ ລາວ
margaret.jones.williams@undp.org, +856 21 267 710